ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1065 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 4 ມິຖຸນາ 2012.

# ຂໍ້ຕົກລົງ

## ວ່າດ້ວຍ ອົງການຄຸ້ມຄອງລາຄາ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ

- ອີງຕາມ ດຳລັດ, ເລກທີ 522/ນຍ, ລົງວັນທີ 23/12/2011, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ອີງຕາມ ດຳລັດ, ເລກທີ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

ເພື່ອຜັນຂະຫຍາຍດຳລັດ, ເລກທີ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໃນການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ,

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງລາ ຄາຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ເຮັດໃຫ້ອົງການຄຸ້ມຄອງລາຄາແຕ່ລະຂັ້ນຮັບຮູ້ ແລະ ຈຳແນກໄດ້ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕໍ່ວຽກງານການຄຸ້ມຄອງລາຄາສິນຄ້າ, ແນໃສ່ຮັກສາສະຖຽນລະພາບດ້ານລາຄາ, ທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ດຳເນີນທຸລະກິດ, ຜູ້ຊົມໃຊ້ ແລະ ລັດ.

**ມາດຕາ 2: ອົງການຄຸ້ມຄອງລາຄາ**

ອົງການຄຸ້ມຄອງລາຄາ ແມ່ນອົງການລັດທີ່ມີສິດອຳນາດ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ.

ອົງການຄຸ້ມຄອງລາຄາ ປະກອບມີ 3 ຂັ້ນ ດັ່ງນີ້:

- ຂັ້ນສູນກາງ ແມ່ນກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີພະແນກຄຸ້ມຄອງຕະຫຼາດສິນຄ້າ-ລາຄາ ເປັນຜູ້ຊ່ວຍວຽກ;
- ຂັ້ນແຂວງ ແມ່ນພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໂດຍມີຂະແໜງການຄ້າພາຍໃນ ເປັນຜູ້ຊ່ວຍວຽກ;
- ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໂດຍມີໜ່ວຍງານ ຫຼື ຈຸງານທີ່ເຮັດໜ້າທີ່ຄຸ້ມຄອງການຄ້າພາຍໃນ ເປັນຜູ້ຊ່ວຍວຽກ.

## ໝວດທີ 2
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງລາຄາ

### ມາດຕາ 3. ພາລະບົດບາດ

ອົງການຄຸ້ມຄອງລາຄາ ມີພາລະບົດບາດ ເປັນເສນາທິການໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງລາຄາສິນຄ້າໃນຂອບເຂດທົ່ວປະເທດ.

- ອົງການຄຸ້ມຄອງລາຄາຂັ້ນສູນກາງ (ກົມການຄ້າພາຍໃນ) ເປັນເສນາທິການ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນການຊີ້ນຳ, ນຳພາ ຈັດຕັ້ງປະຕິບັດການຄຸ້ມຄອງລາຄາໃນຂອບເຂດທົ່ວປະເທດ;
- ອົງການຄຸ້ມຄອງລາຄາຂັ້ນແຂວງ, ນະຄອນຫຼວງ ເປັນເສນາທິການ ໃຫ້ຄະນະປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການປະຕິບັດການຄຸ້ມຄອງລາຄາສິນຄ້າ ໃນຂອບເຂດແຂວງຂອງຕົນ;
- ອົງການຄຸ້ມຄອງຂັ້ນເມືອງ ເປັນເສນາທິການ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການປະຕິບັດການຄຸ້ມຄອງລາຄາສິນຄ້າ ໃນຂອບເຂດເມືອງຂອງຕົນ.

### ມາດຕາ 4. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງລາຄາຂັ້ນສູນກາງ

1. ຄົ້ນຄວ້າ ສະເໜີໂຄງການ, ແຜນງານ ແລະ ມາດຕະການໃນວຽກງານຄຸ້ມຄອງລາຄສິນຄ້າ;
2. ຄົ້ນຄ້ວານະໂຍບາຍ, ລະບຽບການ ແລະ ມາດຕະການໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຄວບຄຸມ ເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ;
3. ຄົ້ນຄວ້າ ກຳນົດລາຍການສິນຄ້າ ແລະ ບໍລິການຄວບຄຸມ ທີ່ຂະແໜງອຸດສາຫະກຳ ແລະ ການຄ້າຄຸ້ມຄອງ ໃຫ້ໄດ້ຢ່າງໜ້ອຍປີລະຄັ້ງ;
4. ຄົ້ນຄວ້າ ກຳນົດໂຄງປະກອບລາຄາສິນຄ້າ ແລະ ບໍລິການຄວບຄຸມໃນແຕ່ລະໄລຍະ;
5. ຊີ້ນຳ, ຕິດຕາມ ແລະ ກວດກາ ການປະຕິບັດໂຄງປະກອບລາຄາສິນຄ້າ ແລະ ນັບທັງການໝອງສິນຄ້າ ເພື່ອເຮັດໃຫ້ສິນຄ້າມີພຽງພໍກັບຄວາມຕ້ອງການ;
6. ຊີ້ນຳ, ນຳພາ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດ ການຄຸ້ມຄອງລາຄາສິນຄ້າ ຕາມທີ່ລັດກຳນົດໃນແຕ່ລະໄລຍະ ທັງເປັນໃຈກາງປະສານ ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ;

7. ສັງລວມເອົາລາຍການສິນຄ້າ ແລະ ການບໍລິການຄວບຄຸມ ຂອງຂະແໜງການອື່ນຮັບຜິດຊອບ ພ້ອມທັງປະກາດ ຫຼື ແຈ້ງໃຫ້ສັງຄົມໄດ້ຮັບຮູ້ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ ໃນລາຍການສິນຄ້າ ແລະ ການບໍລິການເຫຼົ່ານັ້ນ ທັງໃນສະພາບປົກກະຕິ ຫຼື ໃນເວລາມີການປ່ຽນແປງ;
8. ສະເໜີເພີ່ມ ຫຼື ຫຼຸດ ລາຍການສິນຄ້າຄວບຄຸມລາຄາ ຕາມຄວາມເໝາະສົມ ແລະ ຄວາມຈໍາເປັນໃນແຕ່ລະໄລຍະ;
9. ເຜີຍແຜ່, ແນະນໍາ ການຈັດຕັ້ງປະຕິບັດດໍາລັດສະບັບເລກທີ 474/ນຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ທົ່ວເຖິງ ແຕ່ສູນກາງເຖິງທ້ອງຖິ່ນ;
10. ຕິດຕາມ ການເໜັງຕີງຂຶ້ນ-ລົງ ຂອງລາຄາສິນຄ້າ ແລະ ຕິດຕາມພຶດຕິກໍາທີ່ກ່ຽວຂ້ອງກັບການຄຸ້ມຄອງ ລາຄາ ຂອງຜູ້ດໍາເນີນທຸລະກິດ ເພື່ອຊອກຫາວິທີແກ້ໄຂສິ່ງຫຍໍ້ທໍ້ໄດ້ທັນເວລາ ບົນພື້ນຖານການລາຍງານຂອງພະແນກອຸດສາຫະກໍາ ແລະ ການຄ້າ ທີ່ກ່ຽວຂ້ອງ;
11. ຮັບພິຈາລະນາ ແກ້ໄຂຄໍາສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ, ເນື່ອງຈາກການກະທໍາອັນມິຊອບກະທົບຕໍ່ລາຄາ ໃນກໍລະນີທີ່ພະແນກອຸດສາຫະກໍາ ແລະ ການຄ້າຂັ້ນແຂວງ ບໍ່ສາມາດແກ້ໄຂໄດ້;
12. ປັບໃໝ ແລະ ໃສ່ວິໄນ ຕໍ່ຜູ້ທີ່ລະເມີດຂໍ້ຫ້າມ, ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 25 ແລະ 26 ຂອງດໍາລັດເລກທີ 474/ນຍ ຢ່າງເຂັ້ມງວດ;
13. ສະຫຼຸບ, ລາຍງານ ແລະ ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ ຕາມເນື້ອໃນຂໍ້ 3, 4, 5 ແລະ 12 ຂອງມາດຕານີ້ ຕໍ່ລັດຖະບານ;
14. ເປີດໂທລະສັບໄວ້ຕະຫຼອດ 24 ຊົ່ວໂມງ ໃຫ້ສັງຄົມສາມາດເຂົ້າຫາໄດ້ ເພື່ອຮັບການຮ້ອງທຸກໂດຍສະເພາະ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

ມາດຕາ 5. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງລາຄາຂັ້ນແຂວງ, ນະຄອນຫຼວງ

1. ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ກ່ຽວກັບລາຄາ ແລະ ການດໍາເນີນທຸລະກິດ ລວມທັງສະເໜີໂຄງການ,ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງລາຄາ;
2. ຊີ້ນໍາ ໃຫ້ຜູ້ປະກອບການ ປະຕິບັດໂຄງປະກອບລາຄາສິນຄ້າ ແລະ ບໍລິການຄວບຄຸມ ແລະບາງລາຍການສິນຄ້າທີ່ຈໍາເປັນ ຕາມລາຍການທີ່ລັດກໍານົດໃນແຕ່ລະໄລຍະ;
3. ຕິດຕາມ, ກວດກາ, ພິຈາລະນາ, ຮັບຮອງ ຫຼື ສະເໜີ ປັບປຸງ ກ່ຽວກັບໂຄງປະກອບລາຄາສິນຄ້າ ແລະ ບໍລິການ ທີ່ຜູ້ປະກອບການແຈ້ງ ຫຼື ສ້າງຂຶ້ນ (ໂຄງປະກອບລາຄາຕົ້ນທຶນການຜະລິດ/ລາຄາຕົ້ນທຶນນໍາເຂົ້າ, ລາຄາຂາຍຍົກ ແລະ ລາຄາຂາຍຍ່ອຍ) ໃຫ້ເໝາະສົມບົນພື້ນຖານລະບຽບການ, ສະພາບຄວາມເປັນຈິງ ແລະ ສະພາບທາງດ້ານເສດຖະກິດ ໃນແຕ່ລະໄລຍະ.
4. ຊີ້ນໍາ, ນໍາພາ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ແລະ ປະສານສົມທົບກັບພະແນກການ, ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງພາຍໃນແຂວງ ແລະ ນະຄອນຫຼວງໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ໃຫ້ໄດ້ຮັບຜົນດີ;

5. ຊີ້ນຳ, ກວດກາ ແລະ ຕິດຕາມ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໃນການຄຸ້ມຄອງລາຄາ, ການຕິດລາຄາສິນຄ້າ ແລະ ຄ່າບໍລິການ; ທັງລາຍງານສະຖິຕິລາຄາ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເປັນລະບົບ ແລະ ຕາມລະບຽບການທີ່ໄດ້ວາງອອກ;
6. ຈັດເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດດຳລັດສະບັບເລກທີ 474/ນຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ທຸກພາກສ່ວນ ຢ່າງທົ່ວເຖິງ;
7. ຕິດຕາມການເໜັງຕີງຂອງລາຄາ ແລະ ຕິດຕາມພຶດຕິກຳ ທີ່ກ່ຽວຂ້ອງກັບການຄຸ້ມຄອງລາຄາຂອງຜູ້ດຳເນີນທຸລະກິດ;
8. ສະເໜີເພີ່ມ ຫຼື ຫຼຸດ ລາຍການສິນຄ້າຄວບຄຸມລາຄາ ຕາມຄວາມເໝາະສົມ ແລະ ຄວາມຈຳເປັນໃນແຕ່ລະໄລຍະ;
9. ຈັດຕັ້ງໃຫ້ມີບ່ອນຮັບຄຳຮ້ອງທຸກ ຢູ່ແຕ່ລະຕະຫລາດທີ່ແຂວງຄຸ້ມຄອງ ເພື່ອໄກ່ເກ່ຍ ແລະ ແກ້ໄຂ ຄຳຮ້ອງທຸກຂອງຜູ້ຊົມໃຊ້ ທີ່ຖືກເອົາລັດ ເອົາປຽບທາງດ້ານສິນຄ້າ, ລາຄາ, ມາດຕາວັດແທກ ຊັ່ງຜ່ອງ ແລະ ອື່ນໆ ຈາກຜູ້ຂາຍສິນຄ້າ ຫລືຮັບຄຳຮ້ອງທຸກ, ຮ້ອງຟ້ອງຂອງຜູ້ປະກອບການທຸລະກິດ ກ່ຽວກັບການປະຕິບັດການຂອງເຈົ້າໜ້າທີ່ຕ່າງໆ ໃນການກວດກາສິນຄ້າທີ່ປະພຶດຕົນ ຫຼື ມີການກະທຳທີ່ບໍ່ຖືກຕ້ອງ; ໂດຍໃຫ້ຄະນະຈັດສັນຕະຫລາດ ເປັນໃຈກາງຕິດຕາມ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ, ໄກ່ເກ່ຍຢູ່ໃນຂອບເຂດທີ່ຕົນຮັບຜິດຊອບ;
   - ຖ້າການກະທຳຂອງບຸກຄົນດັ່ງກ່າວ ຫາກເກີນສິດອຳນາດ ທີ່ຕົນບໍ່ສາມາດຈະຕັດສິນໄດ້; ຕ້ອງປະກອບເອກະສານຄົບຖ້ວນ ແລ້ວລາຍງານໃຫ້ຂັ້ນເທິງຖັດຕົນເປັນຜູ້ພິຈາລະນາຕາມລຳດັບ;
10. ຮັບພິຈາລະນາ ສະເໜີແກ້ໄຂ ຕາມຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ລາຄາ;
11. ປັບໃໝ ແລະ ໃສ່ວິໄນ ຕໍ່ຜູ້ທີ່ລະເມີດຂໍ້ຫ້າມ, ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ແລະ 26 ຂອງດຳລັດເລກທີ 474/ນຍ ຢ່າງເຂັ້ມງວດ;
12. ສະຫຼຸບ, ລາຍງານ ແລະ ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດຕາມເນື້ອໃນຂໍ້ 3, 7, 10 ແລະ 11 ຂອງມາດຕານີ້ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ(ກົມການຄ້າພາຍໃນ) ແລະ ອົງການປົກຄອງແຂວງ, ນະຄອນຫຼວງ;
13. ເປີດໂທລະສັບໄວ້ຕະຫຼອດ 24 ຊົ່ວໂມງ ໃຫ້ສັງຄົມສາມາດເຂົ້າຫາໄດ້ ເພື່ອຮັບການຮ້ອງທຸກໂດຍສະເພາະ.
14. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 6. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງລາຄາຂັ້ນເມືອງ**

1. ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ກ່ຽວກັບລາຄາ ແລະ ການດຳເນີນທຸລະກິດ ລວມທັງສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງລາຄາ;
2. ຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ຕາມດຳລັດ, ສະບັບເລກທີ 474/ນຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຕາມການມອບໝາຍຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;

3. ປະຕິບັດການເຜີຍແຜ່ດຳລັດສະບັບເລກທີ 474/ນຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ໃຫ້ບັນດາຫົວໜ່ວຍທຸລະກິດ, ຊາວຄ້າຂາຍ ທີ່ຢູ່ພາຍໃນເມືອງຂອງຕົນຢ່າງທົ່ວເຖິງ;
4. ຊຸກຍູ້ບັນດາຫົວໜ່ວຍທຸລະກິດ ແລະ ຫ້າງຮ້ານຕ່າງໆຕິດລາຄາສິນຄ້າ ແລະ ຄ່າບໍລິການທຸກຊະນິດທີ່ວາງຈຳໜ່າຍ ແລະ ໃຫ້ການບໍລິການ ຢູ່ໃນຂອບເຂດເມືອງທີ່ຕົນຮັບຜິດຊອບ, ເພື່ອສະດວກ ໃຫ້ຜູ້ຊື້ ແລະ ໃຊ້ບໍລິການ ໄດ້ປຽບທຽບລາຄາ ແລະ ສາມາດຕັດສິນໃຈໃນການຊົມໃຊ້;
5. ຕິດຕາມ, ກວດກາລາຄາສິນຄ້າໃນຂອບເຂດເມືອງທີ່ຕົນຮັບຜິດຊອບ, ຕາມລາຍການສິນຄ້າທີ່ທາງກະຊວງ ກໍຄືພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງ ກຳນົດອອກໃນແຕ່ລະໄລຍະ;
6. ຕິດຕາມການເໜັງຕີງຂອງລາຄາສິນຄ້າ ໃນທ້ອງຕະຫລາດເປັນປະຈຳແຕ່ລະວັນ, ກຳໃຫ້ໄດ້ສາຍເຫດຂອງການເໜັງຕີງລາຄາສິນຄ້າທີ່ລະບຸໃນຂໍ້ 5 ເທິງນີ້ແລ້ວລາຍງານສະຖິຕິລາຄາສິນຄ້າດັ່ງກ່າວ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງ ທີ່ຕົນຂຶ້ນກັບໃຫ້ປົກກະຕິ ແລະ ທັນເວລາ;
7. ຈັດຕັ້ງໃຫ້ມີບ່ອນຮັບຄຳຮ້ອງທຸກ ຢູ່ແຕ່ລະຕະຫລາດທີ່ເມືອງຄຸ້ມຄອງ ເພື່ອໄກ່ເກ່ຍ ແລະ ແກ້ໄຂ ຄຳຮ້ອງທຸກຂອງຜູ້ຊົມໃຊ້ ທີ່ຖືກເອົາລັດເອົາປຽບທາງດ້ານສິນຄ້າ, ລາຄາ, ມາດຕາວັດແທກ ຊັ່ງຜ່ອງ ແລະ ອື່ນໆ ຈາກຜູ້ຂາຍສິນຄ້າ ຫລື ຮັບຄຳຮ້ອງທຸກ, ຮ້ອງຟ້ອງຂອງຜູ້ປະກອບການທຸລະກິດ ກ່ຽວກັບການປະຕິບັດການຂອງເຈົ້າໜ້າທີ່ຕ່າງໆ ໃນການກວດກາສິນຄ້າທີ່ປະພຶດຕົນ ຫຼື ມີການກະທຳທີ່ບໍ່ຖືກຕ້ອງ; ໂດຍໃຫ້ຄະນະຈັດສັນຕະຫລາດເປັນໃຈກາງຕິດຕາມ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ, ໄກ່ເກ່ຍຢູ່ໃນຂອບເຂດທີ່ຕົນຮັບຜິດຊອບ;
   - ຖ້າການກະທຳຂອງບຸກຄົນດັ່ງກ່າວຫາກເກີນສິດອຳນາດ ທີ່ຕົນບໍ່ສາມາດຈະຕັດສິນໄດ້, ໃຫ້ປະກອບເອກະສານຄົບຖ້ວນ ແລ້ວລາຍງານໃຫ້ຂັ້ນເທິງຖັດຕົນເປັນຜູ້ພິຈາລະນາ ຕາມລຳດັບ;
8. ສະເໜີເພີ່ມ ຫຼື ຫຼຸດ ລາຍການສິນຄ້າຄວບຄຸມລາຄາ ຕາມຄວາມເໝາະສົມ ແລະ ຄວາມຈຳເປັນໃນແຕ່ລະໄລຍະ;
9. ຮັບພິຈາລະນາ ສະເໜີການແກ້ໄຂ ຕາມຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ອັນເນື່ອງມາຈາກການກະທຳອັນມີຜົນກະທົບຕໍ່ລາຄາຕໍ່ຂັ້ນເທິງຖັດຕົນ;
10. ປັບໃໝ ຜູ້ທີ່ລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງດຳລັດ ເລກທີ 474/ນຍ ຢ່າງເຂັ້ມງວດ ຕໍ່ລາຍການສິນຄ້າຄວບຄຸມລາຄາຂອງຂະແໜງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງ ແລະ ໄດ້ມອບໝາຍໃຫ້;
11. ສະຫຼຸບ, ລາຍງານ ແລະ ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດຕາມເນື້ອໃນ ຂໍ້ 4, 5, 6, 7 ແລະ 9 ຂອງມາດຕານີ້ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ ຂອງຕົນ;
12. ເປີດໂທລະສັບໄວ້ຕະຫຼອດ 24 ຊົ່ວໂມງ ໃຫ້ສັງຄົມສາມາດເຂົ້າຫາໄດ້ ເພື່ອຮັບການຮ້ອງທຸກໂດຍສະເພາະ.;
13. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 3

## ນະໂຍບາຍ ຕໍ່ ຜູ້ມີຜົນງານ ແລະມາດຕະການ ຕໍ່ຜູ້ລະເມີດ

ມາດຕາ 7. **ນະໂຍບາຍ**

ພະນັກງານ, ລັດຖະກອນ ແລະ ເຈົ້າໜ້າທີ່ຂອງລັດ ຜູ້ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ດຳລັດ, ເລກທີ 474/ນຍ ແລະ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆຕາມລະບຽບການ.

ມາດຕາ 8. **ມາດຕະການຕໍ່ຜູ້ລະເມີດ**

ພະນັກງານ, ລັດຖະກອນ ແລະ ເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດດຳລັດ, ເລກທີ 474/ນຍ ແລະ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການທາງວິໄນ ຕາມລະບຽບກົດໝາຍທີ່ຄຸ້ມຄອງພວກກ່ຽວ.

## ໝວດ 4

## ບົດບັນຍັດສຸດທ້າຍ

ມາດຕາ 9. **ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ, ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ບັນດາເມືອງໃນຂອບເຂດທົ່ວປະເທດ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ມາດຕາ 10. ທຸກພາກສ່ວນທີ່ກ່ຽວຂ້ອງ; ຫ້ອງການ, ສະຖາບັນ ແລະ ບັນດາກົມ ທີ່ຢູ່ອ້ອມຂ້າງກະຊວງອຸດສາຫະກຳ ແລະ ການຄ້າ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 11. **ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ດຣ. ນາມ ວິຍະເກດ